# Keyboard - ແຜງ ແມ່ພິມ ອໍຣະມະນີ ໒໐໐໕ - Clavier




| | | | | | | |
|---|---|---|---|---|---|---|
| ໜ | : Alt+ນ | ₭ | : Alt+ກ | ◌໌ | : Alt+◌໌ | ຖ້າມັນບໍ່ເດີນ ຕ້ອງເຮັດ |
| ໝ | : Alt+ມ | B | : Alt+ບ | ◌໊ | : Alt+◌໊ | ຜ່ານ Insertion / Insert |
| ຫຼ | : Alt+ຫ | ◌ຼ | : Alt+ລ | ◌໋ | : Alt+◌໋ | |



ການໃຊ້ວັນນະຍຸດມີຢູ່ດ້ວຍກັນສອງປະເພດ ຄື ການໃຊ້ວັນນະຍຸດຢູ່ບົນ ສຣະອິ ສຣະອີ ສຣະອຶ ສຣະອື ສຣະອໍ ໄມ້ກັນ ໄມ້ກົງ (ນິ່ງ) ແລະ ການໃຊ້ວັນນະຍຸດຢູ່ບົນພຍັນຊນະ ອັນປັສຈາກຕົວອັກສອນທີ່ໄດ້ກ່າວມາຂ້າງເທິງນີ້ນຶ່ງ ຊຶ່ງໃນປັດຈຸບັນການ(ປັດ-ຈຸ-ບັນ-ນະ-ການ) ເຮົາສາມາດກົດວັນນະຍຸດ ຕົວທີ່ເຮົາຕ້ອງການຕົວດຽວ ໂດຍບໍ່ຕ້ອງກົດ ໄມ້ເອກໄມ້ໂທຕົວລຸ່ມຕົວເທິງອີກຕໍ່ໄປ ຍ້ອນວ່າ ໂປຣແກຣມສ້າງແມ່ພິມໃນທຸກມື້ນີ້ ອຳນວຍຄວາມສະດວກ ໃຫ້ແກ່ ນັກອອກແບບແມພິມລາວ ເພື່ອເຮັດໃຫ້ການໃຊ້ວັນນະຍຸດ ດຳເນີນໄປແບບອັຕໂນມັດນັ້ນເອງ ແກ່າ

Ref. (e-Book) ແຜງແມ່ພິມລາວ - La refonte d'un clavier lao - ຊຶ່ງທ່ານສາມາດຊອກອ່ານໄດ້ທີ່ບົນ http://laocom.free.fr/01Banniere/Phab_lao/archives/Refonte%20d%27un%20clavier%20lao,%20V3.pdf

ດ້ວຍເຫດນີ້ ແຜງແມ່ພິມ ອໍຣະມະນີ ຈະມີການປ່ຽນແປງພຽງເລັກນ້ອຍ ສຳລັບ ການໃຊ້ວັນນະຍຸດ ດັ່ງຕໍ່ໄປນີ້




ລູກດານຕ່າງໆທີ່ຍັງເຫລືອຢູ່ ແລະ ທີ່ເປັນວ່າງຢູ່ນັ້ນ ໃຫ້ວາງເຄື່ອງຫມາຍ(symboles) ຕາມຮູບເດີມຂອງ ແຜງແມ່ພິມ ຫລືຂອງ ແປ້ນພິມ (clavier AZERTY, keyboard QWERTY) ເພື່ອອຳນວຍຄວາມສະດວກໃຫ້ແກ່ ຜູ່ໃຊ້ (utilisateur, user) ຍ້ອນວ່າ ຂ້າພະເຈົ້າ ຍັງບໍ່ທັນໄດ້ກຳນົດ ການຈັດເຄື່ອງຫມາຍ ສຳລັບແຜງແມ່ພິມລາວເທື່ອ

## ການຮຽກຮ້ອງຄວາມຊ່ວຍເຫລືອ

ຜິວ່າ ທ່ານທີ່ມີຄວາມສາມາດຕົນໃດຢາກຊຸກຍູ້ໃຫ້ຄົນລາວ ໃຊ້ ແຜງແມ່ພິມລາວແບບດຽວກັນ ທ່ານຜູ້ນັ້ນສາມາດ ສ້າງ ຫລື ໃຫ້ຜູ່ອື່ນຊ່ວຍສ້າງ ໂປຣແກຣມ ສຳລັບໃຊ້ keyboard ປະເພດນີ້ ໃນການຂີດຂຽນພາສາລາວ ຂ້າພະເຈົ້າ ຂໍ ຂອບພຣະຄຸນ ອັນມະຫາສານລ່ວງຫນ້າ ແລະ ຂໍໃຫ້ທ່ານມີອາຍຸຫມັ້ນຂວັນຍືນ

ຖ້າທ່ານສ້າງ keyboard ປະເພດນີ້ ກະຣຸນາໃຫ້ທ່ານໃສ່ຊື່ມັນວ່າ « ອໍຣະມະນີ » ເພື່ອຄວາມເປັນເອກພາບ ເທົ່ານັ້ນ ເຖິງແມ່ນວ່າ ທ່ານສ້າງມັນຂຶ້ນມາ ເພື່ອແຈກຢາຍລ້າ ຫລື ເພື່ອເປັນການຂ້າຂາຍກໍຕາມ ຂ້າພະເຈົ້າຂໍຮັບປະກັນ ທ່ານວ່າ ຂ້າພະເຈົ້າບໍ່ຂໍຫຍຸ້ງກ່ຽວນຳກຳໄຮຫລືການເຈັ້ງຂອງທ່ານທຸກປະການ ຈຶ່ງຂໍແຈ້ງມາເພື່ອຊາບ

ເມື່ອວັນທີ 28-08-2009 ແຫ່ງເມືອງ ປາຣີສ